ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 190/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 06 ມີນາ 2025

# ຂໍ້ຕົກລົງ
# ວ່າດ້ວຍຫຼັກການຮັກສາເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມມະຕິກອງປະຊຸມຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2025 ສະບັບເລກທີ01.../ສພທ.ຄນງ, ລົງວັນທີ06.ມີນາ 2025.

## ຜູ້ວ່າການ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ສ້າງຂຶ້ນເພື່ອປ່ຽນແທນຂໍ້ຕົກລົງວ່າດ້ວຍການປ່ຽນແທນຂໍ້ຕົກລົງວ່າດ້ວຍການດັດແກ້ມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາເງິນແຮຝາກບັງຄັບ (ສະບັບເລກທີ 609/ທຫລ, ລົງວັນທີ 12 ມິຖຸນາ 2024) ສະບັບເລກທີ 12/ທຫລ, ລົງວັນທີ 06 ມັງກອນ 2025 ໃຫ້ສອດຄ່ອງກັບທິດທາງການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ເພື່ອຄວບຄຸມປະລິມານເງິນ M2 ໃຫ້ຢູ່ໃນລະດັບຕາມແຜນເງິນຕາທີ່ຖືກຮັບຮອງ ພ້ອມທັງປັບປຸງໂຄງສ້າງເງິນແຮຝາກບັງຄັບໃຫ້ແທດເໝາະກັບສະພາບໃນໄລຍະໃໝ່ ແນໃສ່ຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ.

**ມາດຕາ 2 ຫຼັກການຮັກສາເງິນແຮຝາກບັງຄັບ**

ທະນາຄານທຸລະກິດຕ້ອງປະຕິບັດຫຼັກການຮັກສາເງິນແຮຝາກບັງຄັບ ໄວ້ນຳທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນດັ່ງນີ້:

1. ເງິນແຮຝາກບັງຄັບສຳລັບສະກຸນເງິນກີບແມ່ນໃຫ້ຮັກສາຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 903/ທຫລ, ລົງວັນທີ 27 ສິງຫາ 2024, ໃນນັ້ນ:

- ເປັນເງິນສົດ (ເງິນຝາກຢູ່ທະນາຄານແຫ່ງ ສປ ລາວ) ບໍ່ຕໍ່າກວ່າເກົ້າສິບສ່ວນຮ້ອຍ (90%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;
- ເປັນຫຼັກຊັບທີ່ບໍ່ມີພາລະຜູກພັນຄື ພັນທະບັດຂອງ ທະນາຄານແຫ່ງ ສປປ ລາວ, ພັນທະບັດຂອງກະຊວງການເງິນທີ່ຂາຍຜ່ານ ທຫລ ແລະ ຕະຫຼາດຫຼັກຊັບ ລວມທັງພັນທະບັດບ້ວງຊໍາລະໜີ້ໂຄງການລັດລົງທຶນ ທີ່ມີອາຍຸບໍ່ເກີນ 1 ປີ ບໍ່ເກີນ ສິບສ່ວນຮ້ອຍ (10%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຂອງການຄໍານວນ.

2. ເງິນແຮຝາກບັງຄັບສໍາລັບສະກຸນເງິນຕາຕ່າງປະເທດແມ່ນໃຫ້ຮັກສາເປັນເງິນສົດທັງໝົດ.

**ມາດຕາ 3 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນທີ 13 ມີນາ 2025 ເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການປ່ຽນແທນຂໍ້ຕົກລົງວ່າດ້ວຍການດັດແກ້ມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາເງິນແຮຝາກບັງຄັບ (ສະບັບເລກທີ 609/ທຫລ, ລົງວັນທີ 12 ມິຖຸນາ 2024) ສະບັບເລກທີ 12/ທຫລ, ລົງວັນທີ 06 ມັງກອນ 2025.

**ຮັກສາການຜູ້ວ່າການ**

ວັດທະນາ ດາລາລອຍ